**ທີ່ນີ້ສຽງລາວ *ສຽງຂອງປະຊາຊົນລາວ***

**HereLaoVoice *The Voice of Lao People***

Source: The Asian Pacific News
Vol.1 No. 38 October 26 – November 1, 2001
Email Address: apac.news2@verizon.net

# ເກມການເລືອກຕັ້ງທົ່ວປະເທດລາວ ປີ໒໐໐໒ ລາວນອກໝົດໂອກາດ ຖືກຕຣາໜ້າວ່າ ເປັນປໍ້ຣະປັກໃຫ້ກັບແຜ່ນດິນ

–ວຽງຈັນທນ໌: ພາຍຫລັງການສົນທະນາໃນມື້ວັນທີ່ ໑໗ ຕຸລາ ໒໐໐໑ ນີ້ ສິ້ນສຸດລົງໄປທາງຄນະກັມການ ການເລືອກຕັ້ງແຫ່ງຊາດຂອງ ສປປ.ລາວ ກໍໄດ້ປະກາດຈັດໃຫ້ມີການເລືອກຕັ້ງທົ່ວໄປຂຶ້ນໃນປີ ໒໐໐໒ ໂດຍມີພັກດຽວທີ່ຢືນຢັດເປັນແກ່ນນໍາ ຢູ່ໃນການເລືອກເອົາຜູ້ແທນພັກ ເຂົ້າມາບໍຣິຫານປະເທດຊາດ. ໃນໂອກາດດຽວກັນນີ້ ທາງຄນະເລືອກຕັ້ງໄດ້ແຈ້ງໃຫ້ຮູ້ວ່າ ຈະໄດ້ໃຊ້ມາດຕະການ ໒ ຂອງກົດໝາຍຣັຖທັມນູນຂອງລາວ ເປັນຕົວກໍານົດຊຶ່ງກໍໄດ້ຣະບຸອອກມາວ່າ:

"ສາທາຣະນະລັດປະຊາທິປະຕັຍ ປະຊາຊົນລາວ ເປັນຣັຖປະຊາທິປະຕັຍຂອງປະຊາຊົນ ອໍານາດທຸກສ່ວນແມ່ນມາຈາກປະຊາຊົນ ໂດຍປະຊາຊົນ ແລະ ສໍາຫລັບພົນປໂຍດຂອງທຸກຊົນຊັ້ນໃນສັງຄົມທີ່ປະກອບໄປດ້ວຍກັມມະກອນ ຊາວນາ ແລະ ປັນຍາຊົນ".

ກ່ຽວກັບເຣື້ອງນີ້ ສະຫາຍວິເສດ ສີວຽງສີກສາ ເຊິ່ງເປັນຮອງປະທານ ຂອງຄນະກັມມາທິການສະພາແຫ່ງຊາດລາວຝ່າຍກິຈການຕ່າງປະເທດໄດ້ໃຫ້ສັມພາດເພີ້ມເຕີມແກ່ຜູ້ສື່ຂ່າວຂອງຫນັງສືພິມ"ເດີເນເຊີນ" ຂອງໄທຍ໌ວ່າ "ການເລືອກຕັ້ງທົ່ວໄປໃນລາວ ສ.ສ. ໃນແຕ່ລະຊຸດ ຈະມີອາຍຸດໍາເນີນງານຢູ່ພຽງ ໕ປີ ຊຶ່ງຈະເລີ້ມປະຕິບັດກັນນັບຕັ້ງແຕ່ປີ ໒໐໐໒ ນີ້ເປັນຕົ້ນໄປ. ຕາມຮ່າງກົດໝາຍໃຫມ່ ທີ່ທໍາການເປີດກ້ວາງແລະໃຫ້ໂອກາດແກ່ທຸກໆຄົນ, ທຸກຣະດັບການສຶກສາໃຫ້ໄດ້ເຂົ້າມາຮັບສມັກເລືອກຕັ້ງເປັນ ສ.ສ. ໄດ້ຢ່າງເສຣີແຕ່ຍົກເວັ້ນ ຄົນລາວທີ່ພໍານັກຢູ່ໃນຕ່າງປະເທດແມ່ນຫມົດສິດທິ ຄືບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດຈາກຮ່າງກົດຫມາຍໃຫມ່ນີ້.

ກົດຫມາຍຣັຖທັມນູນ ຂອງ ສປປ.ລາວ ໄດ້ຣະບຸອອກມາວ່າ: ໃຫ້ຄນະກັມການຈັດການເລືອກຕັ້ງໄດ້ຈັດໃຫ້ມີການເລືອກຕັ້ງຂຶ້ນມາໃນທົ່ວປະເທດ ກ່ອນທີ່ສະພາຜູ້ແທນປະຊາຊົນຈະຫມົດອາຍຸການບໍຣິຫານປະເທດຊາດລົງໄປຢ່າງນ້ອຍສອງເດືອນ ຫລື ໖໐ ມື້ຊຶ່ງຈະໄດ້ໃຫ້ຈັດມີການເລືອກທົ່ວໄປກ່ອນ ໗໐ ມື້ຫລືໄຣຍະນຶ່ງປີກໍໄດ້.

"ແຕ່ເຫດຜົນທີ່ແທ້ຈິງແລ້ວ ໃນການທີ່ຕ້ອງເລັ່ງຈັດໃຫ້ມີການເລືອກຕັ້ງໃຫ້ໄວຂຶ້ນມານັ້ນກໍແມ່ນຕ້ອງການຢາກຈະ

ໃຫ້ ສ.ສ. ທີ່ຈະໄດ້ເຂົ້າມາບໍຣິຫານງານໃຫມ່ນັ້ນ ສາມາດຜ່ານຂັ້ນຕອນແລະຮຽນຮູ້ເຣື້ອງກົດຫມາຍ ທີ່ກ່ຽວຂ້ອງ ກັບການປະຕິຮູບ ເສດຖະກິຈແລະສັງຄົມອັນເປັນພົນທີ່ເນື່ອງມາຈາກກອງປະຊຸມຂອງພັກປະຊາຊົນປະຕິວັດຄັ້ງທີ່ເຈັດ ທີ່ຜ່ານມານັ້ນ".

ສະຫາຍວິເສດກ່າວວ່າ: ຫາກການເລືອກຕັ້ງກຳນົດເອົາເດືອນທັນວາ ໒໐໐໒ ນີ້ມັນຈະເຮັດໃຫ້ ສ.ສ. ທີ່ຈະໄດ້ ເຂົ້າມາປະຕິບັດວຽກງານໃນສະພາ ກໍຄົງຈະກາຍມາເປັນປີ ໒໐໐໓ ໄປແລ້ວ, ເຊິ່ງຈະເຮັດໃຫ້ສະພາຊຸດໃຫມ່ ມີອາຍຸສັ້ນເຂົ້າໄປອີກເພາະຕາມແຜນການນັ້ນສະພາຈະຕ້ອງມີອາຍຸການເຮັດວຽກງານຢູ່ຕັ້ງແຕ່ປີ ໒໐໐໑ ຫາ ປີ ໒໐໐໕. ປັດຈຸບັນສະພາປະຊາຊົນປະຕິວັດລາວ ປະກອບດ້ວຍ ສ.ສ. ໙໙ ຄົນ ແຕ່ສະພາຊຸດໃຫມ່ທີ່ຈະເລືອກ ເຂົ້າມາບໍຣິຫານງານເທື່ອນີ້ຈະເພີ້ມຂຶ້ນເປັນ ໑໐໐ ຄົນຂຶ້ນໄປເພາະຄາດວ່າໃນປີຫນ້ານີ້ ປະຊາກອນລາວໃນທົ່ວປະ ເທດ ຈະເພີ້ມຂຶ້ນເປັນ ໕.໔ ລ້ານຄົນ, ໂດຍແຕ່ລະເຂດການເລືອກຕັ້ງຈະເປັນຕົວແທນ ໃຫ້ກັບປະຊາຊົນ ໕໐,໐໐໐ ຄົນ ນອກຈາກນີ້ກໍຍັງມີເຂດປົກຄອງພິເສດແລະແຂວງຂນາດນ້ອຍຊື່ງມີປະຊາກອນຕ່ຳກວ່າ ໑໕໐,໐໐໐ ຄົນອີກສາມເຂດ. ສຳຫລັບຄຸນສົມບັດຂອງຜູ້ສມັກຮັບເລືອກຕັ້ງເຂົ້າມາເປັນ ສ.ສ. ນັ້ນ ຈະໃຫ້ທຸກຄົນໄດ້ມີສ່ວນຮ່ວມທຸກໆຣະດັບ ການສຶກສາ ໂດຍບໍ່ຈຳເປັນຈະຕ້ອງຮຽນຈົບການສຶກສາຣະດັບຂັ້ນສູງໆ ເພາະເຄີຍມີຂໍ້ສເນີໃຫ້ ສ.ສ. ຈະຕ້ອງ ຮຽນຈົບຣະດັບຂັ້ນມັທຍົມເປັນຢ່າງນ້ອຍ ແມ່ນໄດ້ຮັບການຄັດຄ້ານຢ່າງຫນັກຫນ່ວງຈາກຄນະພັກ ເພາະບຸກຄົນທີ່ ອາສັຍຢູ່ໃນປ່າໃນເຂດກັນດານບາງຜູ້ຄົນບໍ່ໄດ້ຮ່ຳຮຽນຕາມຣະບົບການສຶກສາຂອງໃນເມືອງແຕ່ກໍມີຄວາມສາມາດ ມີປະສົບການທາງດ້ານການປາກເວົ້າ ແລະສາມາດນຳເອົາມາໃຊ້ຢູ່ໃນສະພາຜູ້ແທນໄດ້. "ແຕ່ໂດຍຂໍ້ເທັດຈິງ ແລ້ວ ຄົນທີ່ໄດ້ຮັບເລືອກເຂົ້າມາສະພາຈະຮຽນຈົບຈາກຊັ້ນມັທຍົມເປັນຢ່າງນ້ອຍຢູ່ແລ້ວ ແຕ່ກົດຫມາຍກໍໄດ້ເປີດໂອ ກາດ ໃຫ້ທຸກໆຄົນມີສ່ວນຮ່ວມຢູ່ແລ້ວ" ສະຫາຍວິເສດກ່າວ.

ປະເທດລາວຕອນນີ້ ແມ່ນຢູ່ພາຍໃຕ້ການປົກຄອງຂອງພັກຄອມມຸຍນິດລາວ ກໍຕັ້ງແຕ່ປີ ຄສ. ໑໙໗໕ ເຊິ່ງຂະ ບວນການປະເທດລາວຊນະສົງຄາມແລະເຂົ້າມາຍຶດອຳນາດຢູ່ໃນທົ່ວປະເທດຢ່າງສຳເຣັດຜົນ. ກົດຫມາຍຣັຖທັມ ນູນໃຫມ່ຂອງພັກຄອມມຸຍນິດລາວທີ່ຂຽນຂຶ້ນມາໃຫມ່ແມ່ນຣະບຸອອກມາຊັດເຈນວ່າ "ພົລເມືອງລາວທີ່ອາສັຍຢູ່ ແລະເຮັດວຽກງານປະກອບສ່ວນກັບພັກ/ລັດຢູ່ໃນປະເທດລາວເທົ່ານັ້ນທີ່ມີສິດເສຣີພາບເຂົ້າມາສະມັກເລືອກຕັ້ງເປັນ ຜູ້ແທນໄດ້. ສຳຫລັບຄົນລາວຢູ່ໃນຕ່າງປະເທດ ເຖິງແມ່ນວ່າຈະມີຣະດັບການສຶກສາສູງໆຂັ້ນດອກເຕີ ຂັ້ນປະຣິນ ຍາ ແລະປັນຍາຊົນ ຖືວ່າເປັນປໍຣະປັກໃຫ້ກັບແຜ່ນດິນທີ່ຫນີອອກມາຕໍ່ຕ້ານຣັຖບານແມ່ນບໍ່ມີສິດແລະພົນປໂຍດ ໃດໆທີ່ຈະເຂົ້າມາປະກອບສ່ວນຢູ່ໃນການເລືອກຕັ້ງໄດ້ໂດຍເດັດຂາດ. ຍົກເວັ້ນຄົນລາວ ທີ່ຫນີອອກມາກ່ອນປີ ໑໙໗໐ ນັ້ນຣັຖບານລາວຈະມີນະໂຍບາຍໃຫ້ກັບຄືນໄປລົງທືນ ແລະຊ່ວຍເຫລືອໃນສິ່ງທີ່ຈຳເປັນໄດ້ຢ່າງຖືກຕ້ອງ ຕາມກົດຫມາຍຢູ່ໃນບ້ານເກີດຂອງຕົນ./.

Source: The Asian Pacific News
Vol.1 No. 38 October 26 – November 1, 2001
Email Address: apac.news2@verizon.net

ພວກເຮົາ ນາອີໄຈ ຄຳເວົ້າ ຂອງ ຝ່າຍຄອມມຸຍນິດ ທີ່ວ່າ ນາຂ້າງເທິງນັ້ນ ວ່າມັນເປັນຄວາມຈິງ ແລະ ຈະເຮັດໄດ້ດັ່ງທີ່ເຂົາໄດ້ເວົ້າແລ້ວນັ້ນບໍ່. ພວກເຮົາຈະໃຫ້ຫົວຂໍ້ການອີໄຈຂອງພວກເຮົາວ່າ

## ແຜນການເລືອກຕັ້ງ ຈອມປອມ ຂອງພັກປະຊາຊົນປະຕິວັດລາວ (ພັກຄອມມູຍນິດລາວ)

ດັ່ງ ທີ່ ຂ່າວເຂົາກ່າວວ່າ ນາຂ້າງເທິງນັ້ນ,

ທາງຄນະເລືອກຕັ້ງໄດ້ແຈ້ງໃຫ້ຮູ້ວ່າ ຈະໄດ້ໃຊ້ມາດຕະການ ໔ ຂອງກົດໝາຍຣັຖທັມມູນຂອງລາວ ເປັນ

ຕົວກຳນົດຊຶ່ງກໍໄດ້ຣະບຸອອກມາວ່າ:

"ສາທາຣະນະລັດປະຊາທິປະຕັຍ ປະຊາຊົນລາວ ເປັນຣັຖປະຊາທິປະຕັຍຂອງປະຊາຊົນ ອຳນາດທຸກສ່ວນແມ່ນມາຈາກປະຊາຊົນ ໂດຍປະຊາຊົນ ແລະ ສຳຫລັບຜົນປໂຍດຂອງທຸກຊົນຊັ້ນໃນສັງຄົມທີ່ປະກອບໄປດ້ວຍກັມມະກອນຊາວນາ ແລະ ປັນຍາຊົນ".

ຄຳເວົ້າຂອງຄະນະເລືອກຕັ້ງ ທາງຂ້າງເທິງນີ້ ເປັນຄຳເວົ້າທີ່ຂັດກັບຄວາມເປັນຈິງ ແລະ ການປະຕິບັດ ຂອງຜູ້ນຳຄອມມູຍນິດລາວ ແລະ ຝ່າຍເລືອກຕັ້ງເອງ.

ຖ້າວ່າ "ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເປັນ ລັດປະຊາທິປະໄຕຂອງປະຊາຊົນ" ແທ້,

ເປັນຫຍັງ? ປະຊາຊົນລາວໃນປະເທດ ຈຶ່ງບໍ່ມີສິດ ປະຊາທິປະໄຕ ໃນການເລືອກເອົາ ຜູ້ນຳຂອງເຂົາເຈົ້າເອງ?

ເປັນຫຍັງ? ພັກປະຊາຊົນປະຕິວັດລາວ (ພັກຄອມມູຍນິດລາວ) ຈຶ່ງເລືອກເອົາແຕ່ຄົນສະເພາະຂອງພັກຕົນເອງ ແລະ ເອົາອອກມາສະແດງ ໃຫ້ປະຊາຊົນລາວເລືອກ ເໝືອນຢ່າງຫລິ້ນລະຄອນ ຫລື ຈ່າວ ຂາຍຂອງ?

ເປັນຫຍັງ? ຈຶ່ງບໍ່ເປີດໂອກາດ ໃຫ້ປະຊາຊົນທົ່ວໆໄປ ໄດ້ມີໂອກາດເລືອກເອົາຜູ້ແທນຂອງເຂົາເຈົ້າເອງ ທີ່ບໍ່ສັງກັດພັກປະຊາຊົນປະຕິວັດລາວ?

ຖ້າວ່າ ເປັນ ປະຊາທິປະໄຕ ແທ້, ປະຊາຊົນ ຕ້ອງມີ ສິດໃນການເລືອກເອົາຜູ້ນຳຂອງເຂົາເຈົ້າເອງ ປາສຈາກ ການບັງຄັບແລະການບົງການ ຈາກພັກໃດພັກນຶ່ງ.

ສ່ວນ ພັກການເມືອງ ຢ່າງນ້ອຍ ກໍ່ຕ້ອງມີ ສອງ ພັກການເມືອງ ຈຶ່ງເອີ້ນວ່າ "ປະຊາທິປະໄຕ" ໄດ້.

ດັ່ງນັ້ນ ປະຊາທິປະໄຕ ຂອງຄອມມູຍນິດ ຈຶ່ງແມ່ນ ປະຊາທິປະໄຕ ທີ່ ຈອມປອມ!!!

ສະນັ້ນ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຈຶ່ງ ບໍ່ເປັນ ລັດປະຊາທິປະໄຕຂອງປະຊາຊົນ, ເພາະປະຊາຊົນ ບໍ່ມີສິດ ປະຊາທິປະໄຕ.

ແລະ ຕໍ່ຄຳເວົ້າຂອງ ຄະນະເລືອກຕັ້ງທີ່ວ່າ:

"ອຳນາດທຸກສ່ວນແມ່ນມາ ຈາກປະຊາຊົນ ໂດຍປະຊາຊົນ ແລະ ສຳຫລັບຜົນປໂຍດຂອງທຸກຊົນຊັ້ນໃນສັງຄົມ ທີ່ປະກອບໄປດ້ວຍກັມມະກອນ ຊາວນາ ແລະ ປັນຍາຊົນ"

ຄຳເວົ້າດັ່ງກ່າວນີ້ ແທ່ງຜິດ ທັງຫມົດ ຕໍ່ຄວາມເປັນຈິງ ແລະ ການປະຕິບັດ.

ຈັງໃດ ຈຶ່ງເວົ້າໄດ້ວ່າ ອຳນາດທຸກສ່ວນແມ່ນມາ ຈາກປະຊາຊົນ!?!!!??? (ຄົງຈະແມ່ນຫລັບຫູຫລັບຕາເວົ້າ!!!)

ໃນເມື່ອປະຊາຊົນ ບໍ່ມີ ອຳນາດ ໃນການເລືອກເອົາ ຜູ້ແທນ ຂອງເຂົາເຈົ້າເອງ ດ້ວຍຄວາມສະມັກໃຈ, ເຮົາ ຈະເວົ້າໄດ້ວ່າ ອຳນາດທຸກສ່ວນ ມາຈາກປະຊາຊົນ ເຂົາ ໄດ້ຢ່າງໃດ?

ອັນນີ້ ມັນເປັນການ ໂກງເອົາອຳນາດ ຂອງພັກປະຊາຊົນປະຕິວັດລາວ ຈາກປະຊາຊົນ ຢ່າງຫນ້າຕາ ດ້ານໆ.

ເອົາຜູ້ສະມັກເລືອກຕັ້ງຈອມປອມ ຂອງຕົນ ມາໃຫ້ປະຊາຊົນເລືອກ, ແລະ ໃຫ້ຜູ້ແທນຈອມປອມ ມາມີອຳນາດ, ເຮົາຈະເວົ້າໄດ້ວ່າ "ອຳນາດ" ນັ້ນ ມາຈາກ ປະຊາຊົນ ໄດ້ຢ່າງໃດ???!!!

ອັນນີ້ ມັນເປັນ ການ "ໂກງອຳນາດ" ແລະ ການ "ກອບໂກຍອຳນາດ" ຂອງພັກປະຊາຊົນປະຕິວັດລາວ ຢ່າງແທ້ຈິງ.

ເມື່ອເວົ້າລວມ ແລະ ແປຄວາມຫມາຍ ໄປທັງຫມົດໃນຂໍ້ຄວາມໃນປະໂຫຍກຂອງຝ່າຍຄະນະເລືອກຕັ້ງ ທີ່ວ່າ:

"ອຳນາດທຸກສ່ວນແມ່ນມາ ຈາກປະຊາຊົນ ໂດຍປະຊາຊົນ ແລະ ສຳຫລັບຜົນປໂຍດຂອງທຸກຊົນຊັ້ນໃນສັງຄົມ ທີ່ປະກອບໄປດ້ວຍກັມມະກອນ ຊາວນາ ແລະ ປັນຍາຊົນ"

ຍິ່ງຜິດ ໄປກັນໃຫຍ່!!!

ເມື່ອອຳນາດ ບໍ່ໄດ້ ມາຈາກ ປະຊາຊົນ, ເຮົາຈະເວົ້າໄດ້ວ່າ "ໂດຍປະຊາຊົນ" ໄດ້ຢ່າງໃດ...ໄດ້ແນວໃດ!!!???

ແລະ ຈະເວົ້າໄດ້ວ່າ

"ສຳຫລັບຜົນປະໂຫຍດຂອງທຸກຊົນຊັ້ນໃນສັງຄົມ ທີ່ປະກອບໄປດ້ວຍກຳມະກອນຊາວນາ ແລະ ປັນຍາຊົນ" ໄດ້ຢ່າງໃດ!!?

ອັນນີ້ ມັນແມ່ນ ສຳລັບ ຜົນປະໂຫຍດຂອງ "ຊົນຊັ້ນປົກຄອງ" ເທົ່ານັ້ນ, ກໍຄື "ສະມາຊິກພັກປະຊາຊົນປະຕິວັດລາວ" ເທົ່ານັ້ນເອງ!!!

ພວກຊົນຊັ້ນນີ້ ໄດ້ຮັບຜົນປະໂຫຍດ ຢ່າງໃຫຍ່ຫລວງ. ພວກ "ຊົນຊັ້ນປົກຄອງ" ນີ້, ພວກເຂົາບໍ່ໄດ້ລວມເອົາເຂົາເຈົ້າເຂົ້າໃນຊົນຊັ້ນໃນສັງຄົມ. ພວກເຂົາຢູ່ເຫນືອຊົນຊັ້ນອື່ນໆຢູ່ໃນສັງຄົມລາວ ດັ່ງທີ່ເຂົາວ່າ ປະກອບໄປດ້ວຍກັມມະກອນຊາວນາ ແລະ ປັນຍາຊົນ. ພວກຊົນຊັ້ນປົກຄອງ ນີ້ ເປັນຊົນຊັ້ນ "ກົດຂີ່ຂູດຮີດ". ຍາມໃດ ພວກເຂົາ ກໍຢູ່ເຫນືອຊົນຊັ້ນອື່ນໆ. ສ່ວນຊົນຊັ້ນ ກັມມະກອນຊາວນາ ແລະ ປັນຍາຊົນ ເປັນຊົນຊັ້ນ ທີ່ "ຖືກກົດຂີ່ຂູດຮີດ".

ເມື່ອຄະນະເລືອກຕັ້ງ ມາແອບອ້າງ ເອົາອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນ ມາເປັນເຄື່ອງບັງຫນ້າ ແລະ ຕົວະ

ຍ໊ອະປະຊາຊົນ ແລະຊາວໂລກ ນັ້ນ ຈຶ່ງຖືວ່າເປັນ ຫນ້າລະອາຍໃຈທີ່ສຸດ.

ຕໍ່ກັບຄຳເວົ້າ ຂອງ ສະຫາຍ ວິເສດ ສະແຫວງສຶກສາ ຫລື ສະຫາຍ ຜີເຜດ ບໍ່ສະແຫວງສຶກສາ ເຊິ່ງເປັນຮອງປະທານ ຂອງຄນະກັມມາທິການສະພາແຫ່ງຊາດລາວຝ່າຍກິຈການຕ່າງປະເທດ ໃຫ້ສັມພາດເພີ້ມເຕີມແກ່ຜູ້ສື່ຂ່າວຂອງ ຫນັງສືພິມ"ເດີເນເຊີນ" ຂອງໄທຍ໌ທີ່ວ່າ:

"ການເລືອກຕັ້ງທົ່ວໄປໃນລາວ ສ.ສ. ໃນແຕ່ລະຊຸດ ຈະມີອາຍຸດຳເນີນງານຢູ່ພຽງ ໕ປີ ຊຶ່ງຈະເລີ້ມປະຕິບັດກັນນັບ ຕັ້ງແຕ່ປີ ໒໐໐໔ ນີ້ເປັນຕົ້ນໄປ. ຕາມຮ່າງກົດໝາຍໃຫມ່ ທີ່ທຳການເປີດກ້ວາງແລະໃຫ້ໂອກາດແກ່ທຸກໆຄົນ, ທຸກຣະດັບການສຶກສາໃຫ້ໄດ້ເຂົ້າມາຮັບສມັກເລືອກຕັ້ງເປັນ ສ.ສ. ໄດ້ຢ່າງເສຣີແຕ່ຍົກເວັ້ນ ຄົນລາວທີ່ພຳນັກຢູ່ໃນ ຕ່າງປະເທດແມ່ນຫມົດສິດທິ ຄືບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດຈາກຮ່າງກົດຫມາຍໃຫມ່ນີ້."

ການເລືອກຕັ້ງ ຫລືວ່າ "ການຕັ້ງເລືອກ"?!!(ພວກເຂົາຄວນຈະໃຊ້ ສັບນີ້, "ການຕັ້ງເລືອກ" ຈະຖືກກວ່າ, ເພາະວ່າ ສ.ສ. ຫລືວ່າ ສໍ.ສໍ້ ແມ່ນຖືກ ຕັ້ງ ຂຶ້ນມາກ່ອນແລ້ວ. ຈະໄດ້ ຫລື ບໍ່ໄດ້ ພັກຄອມມຸຍນິດ ຮູ້ກ່ອນຫມົດແລ້ວ ເພາະໄດ້ຈັດ ແຖ່ນນັ່ງໃຫ້ ສໍ ສໍ້ ຫລື ສໍ ເສືອ ໄວ້ເປັນທີ່ຮຽບຮ້ອຍແລ້ວ. ການເລືອກຕັ້ງ ຫລືວ່າ ການຕັ້ງເລືອກ ນັ້ນເປັນການ ຫລອກລວງຕົບຕາປະຊາຊົນລາວ ແລະຊາວໂລກ ຊື່ໆ).

ຕາມທີ່ ສະຫາຍ ຜີເຜດ ບໍ່ສະແຫວງສຶກສາ ກ່າວ:

"ສ.ສ. ໃນແຕ່ລະຊຸດ ຈະມີອາຍຸດຳເນີນງານຢູ່ພຽງ ໕ປີ ຊຶ່ງຈະເລີ້ມປະຕິບັດກັນນັບ ຕັ້ງແຕ່ປີ ໒໐໐໔ ນີ້ເປັນຕົ້ນໄປ..."

ມີອາຍຸດຳເນີນງານ ຫລືວ່າ ມີອາຍຸ "ລຳເນີນນານ" !!!???

ແຕ່ລະຊຸດ ແລະ ຫລາຍໆຊຸດ ທີ່ຜ່ານມາ ບໍ່ເຫັນເຮັດໃຫ້ປະເທດຊາດບ້ານເມືອງປ່ຽນແປງໄປສູ່ເສັ້ນທາງທີ່ດີ ຫລື ຈະເລີນຮຸ່ງເຮືອງ? ມີແຕ່ຫລົ້ມ ແຕ່ຈົມ ເປັນຫນີ້ ເປັນສິນ ຕ່າງປະເທດຈົນຖ້ວມຫົວ!!!

ທີນຶ່ງ ທີສອງ ຂອງໂລກ ກໍ່ເປັນໄດ້ແຕ່ແນວສິ່ງທີ່ບໍ່ດີ ຢ່າງເຊັ່ນ: ເປັນທີສອງ ຂອງໂລກ ໃນການຜລິດ ຢາຝິ່ນ, ແລະ ຕິດອັນດັບ ໃນການເປັນຫນີ້ຕ່າງປະເທດ ຫລາຍກ່ວາ ມີ໓໐໐ ລ້ານໂດລາສະຫາລັດ.

ກົງກັນຂ້າມ, ບາດເປັນ ທີໂຈ໋ກ ຫລື ລາກທ້າຍຫມູ່ ໃນໂລກ ໃນການເປັນປະເທດດ້ອຍພັທນາ, ແລະ ພ້ອມທັງ ຕິດອັນດັບຂອງໂລກໃນການ ສໍ້ລາດບັງຫລວງ.

ເປັນຫຍັງຈຶ່ງບໍ່ເບິ່ງ ປະຊາຊົນ ຄົນລາວເຮົາແນ່???!!!!

໕ ປີ ໑໐ ປີ ແຕ່ລະຊຸດນັ້ນ ຄວນຖາມປະຊາຊົນເຂົາ, ເຂົາເຫັນດີນ້ອຍຫລາຍປານໃດ???!!!!

ບໍ່ແມ່ນ ກົ້ມຫນ້າ ກົ້ມຕາ ແຫງນມອງ ຍໍມື ຮັບຄຳສັ່ງ ຈາກພັກເຫນືອຫົວ ແຕ່ຢ່າງດຽວ.

ຖາມຕົວເອງ ເບິ່ງແນ່! ວ່າ ໕ ປີ ທີ່ ລຳເນີນນານ ຫລື ດຳເນີນງານ ມີຜົນງານ ຫຍັງມາໃຫ້ປະຊາຊົນ ແລະ ປະເທດຊາດ???

ຖາມຕົວເອງ ເບິ່ງວ່າ,

ເປັນຫຍັງປະຊາຊົນລາວ ແລະ ປະເທດລາວ ຈຶ່ງທຸກຍາກລົງກ່ວາເກົ່າ? ບັດຕ່າງກັບ ຄະນະພັກ ຄະນະລັດ ຍິ່ງຮັ່ງມີ ຍິ່ງມີອຳນາດ ຍິ່ງໃຊ້ອຳນາດບາດໃຫຍ່ ຂຶ້ນກ່ວາເກົ່າ???!!!!

ມັນເປັນຍ້ອນ ສາຍເຫດໃດ?

ນີ້ ເປັນຄຳຖາມ ທີ່ ຈະຕ້ອງຖາມ ແລະ ທຳການແກ້ໄຂ.

ຖ້າ ບໍ່ດັ່ງນັ້ນ ການເລືອກຕັ້ງ ໕ ປີ ຕໍ່ ຊຸດ ກໍ່ບໍ່ມີຄວາມຫມາຍຫຍັງຫມົດ.

ຄວນຈະເອີ້ນວ່າ ການເລືອກຕັ້ງ ຕໍ່ ສຸດ ຈະດີກວ່າ.

ສະນັ້ນ ການເລືອກຕັ້ງ ຈຶ່ງບໍ່ມີຄວາມຫມາຍຫຍັງສຳລັບປະເທດຊາດແລະປະຊາຊົນ. ຈະມີອາຍຸການ ລຳເນີນນານ ຫລືມີອາຍູການ ດຳດົນນານ ຈັກເທົ່າໃດປີ ກໍຕາມ, ກໍບໍ່ມີຄວາມຫມາຍຫຍັງຫມົດ..., ເພາະວ່າ ສ.ສ. ຂອງພັກ ກາຍເປັນ ສໍ ສົນ, ສໍ ສົ້, ໄຮ້ອຳນາດ ໄຮ້ປັນຍາ ກິນແຕ່ຢາ ຂາຍຢາຝິ່ນ ແລະ ເບື່ອເມົາ ປະຊາຊົນລາວ ຊາວຫມູ່ນລາວ ແລະ ເຍົາວະຊົນ ລາວ.

ກໍ່ເທົ່ານັ້ນເອງ!

ຜີເຜດ ກ່າວອີກວ່າ:

"...ກົດໝາຍໃຫມ່ ທີ່ທຳການເປີດກ້ວາງແລະໃຫ້ໂອກາດແກ່ທຸກໆຄົນ,

ທຸກຣະດັບການສຶກສາໃຫ້ໄດ້ເຂົ້າມາຮັບສມັກເລືອກຕັ້ງເປັນ ສ.ສ. ໄດ້ຢ່າງເສຣີແຕ່ຍົກເວັ້ນ ຄົນລາວທີ່ພຳນັກຢູ່ໃນຕ່າງປະເທດແມ່ນຫມົດສິດທິ ຄືບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດຈາກຮ່າງກົດຫມາຍໃຫມ່ນີ້"

ຖ້າວ່າ ເປັນການເລືອກຕັ້ງ ທີ່ "ເສລີ"

ເປັນຫຍັງ ຈຶ່ງມີແຕ່ ສະມາຊິກ ພັກປະຊາຊົນປະຕິວັດລາວ ເທົ່ານັ້ນໄດ້ຖືກອະນຸຍາດໃຫ້ລົງສະມັກ???!!!!

ນີ້ເປັນການເປີດໂອກາດໃຫ້ທຸກຄົນທູກລະດັບການສຶກສາໃຫ້ໄດ້ເຂົ້າມາສມັກແທ້ຈິງຫລືບໍ່!!!????

ນີ້ ເປັນການຕົວະປະຊາຊົນ ແລະຊາວໂລກໄດ້ຢ່າງຫນ້າຕາເສີຍໆໄດ້ນໍ!!!!

ຫນ້າບໍ່ອາຍ ອີຫລີໃດ໋ນໍ ຜີເຜດ ຕົວນີ້.

ບາງສ່ວນ ອາດຈະຖືກຕາມ ຜີເຜດ ທີ່ວ່າ:

ການເລືອກຕັ້ງ ທີ່ "ເສລີ".

ເພາະຄຶງຈະ...

ບໍ່ແມ່ນ... ການເລືອກຕັ້ງ ທີ່ "ລາວ" ແລະ ບໍ່ແມ່ນການເລືອກຕັ້ງ ເພື່ອ ປະຊາຊົນລາວ.

ຄວາມຫມາຍ ຂອງ ຜີເຜດ ອາດຈະຖືກ ຂໍ້ນີ້!!!

ແລະ ຜີເຜດ ອ້າງເອົາກົດຫມາຍລັດຖທັມນຸນຄອມມຸຍນິດ ທີ່ຮັດຄໍ ປະຊາຊົນລາວມາອ້າງ ວ່າ:

"...ກົດຫມາຍຣັຖທັມນູນ ຂອງ ສປປ.ລາວ ໄດ້ຣະບຸອອກມາວ່າ: ໃຫ້ຄນະກັມການຈັດການເລືອກຕັ້ງໄດ້ຈັດໃຫ້ມີການເລືອກຕັ້ງຂື້ນມາໃນທົ່ວປະເທດ ກ່ອນທີ່ສະພາຜູ້ແທນປະຊາຊົນຈະຫມົດອາຍຸການບໍຣິຫານປະເທດຊາດລົງໄປຢ່າງນ້ອຍສອງເດືອນ ຫລື ໖໐ ມື້ຊື່ງຈະໄດ້ໃຫ້ຈັດມີການເລືອກທົ່ວໄປກ່ອນ ໗໐ ມື້ຫລືໄຣຍະນື່ງປີກໍໄດ້..."

ທ່ານ ຜີເຜດ ຈະແອບອ້າງເອົາ ກົດຫມາຍລັດ "ທັມນູນ" ຂອງທ່ານ ແລະ ຂອງພວກທ່ານ ມາອ້າງແນວໃດກໍໄດ້.

ເພາະພວກທ່ານ ມີອຳນາດ ເດັດຂາດ ຢູ່ເຫນືອ ປະຊາຊົນລາວ.

ພວກທ່ານ ຈະອ້າງເອົາ ຂໍ້ ໔ ຂໍ້ ໑໐ ຂໍ້ ໑໐໐ ຂໍ້ ໑໐໐໐ ກໍບໍ່ມີຄວາມຫມາຍຫຍັງຫມົດ, ເພາະປະຊາຊົນ ບໍ່ຮູ້ວ່າພວກທ່ານມີ ກົດຫມາຍ ຫລື ກົດ ມາຍາ ຫລື ກົດລັດ ທັມນູນ ຈັກຂໍ້. ພວກທ່ານ ສາມາດໃຊ້, ປ່ຽນແປງ, ແລະຫົດຍືດ ໄດ້ ຕາມໃຈຊອບ ຂອງພວກທ່ານ,

ເພາະ ພວກທ່ານ ຫລືວ່າ ພວກຖ່ານ ມີອຳນາດຢູ່ເຫນືອ ປະຊາຊົນ!!!!

ການເລືອກຕັ້ງ ຫລື ການຕັ້ງເລືອກ ຂອງພວກທ່ານ ບໍ່ຈຳເປັນ ຕ້ອງຫາ ມື້ ຫາ ເວັນ. ເອົາຍາມໃດ ເວລາໃດກໍ່ໄດ້ຕາມໃຈຊອບ.

ດີຫລາຍນໍ! ພວກຖ່ານ!!!

ສອງເດືອນກ່ອນ ການເລືອກຕັ້ງ ຖ່ານກໍ່ປະກາດ ອອກມາໄດ້ ວ່າຈະມີການເລືອກຕັ້ງ. ສ່ວນປະຊາຊົນ ແມ່ນ ບໍ່ຮູ້ອີໂຫນ ອີ່ເຫນ ຫຍັງຫມົດ.

ໂອຍ!!! ຈັ່ງແມ່ນ ຖ່ານ ມີສິດ ມີອຳນາດ ແທ້ນໍ!!!!!

ຕາມລະບົບ ປະຊາທິປະໄຕ ຂອງທົ່ວໂລກ ເຂົາໃຊ້ກັນແລ້ວ ການສະມັກຫາສຽງ ຫລື ການເລືອກຕັ້ງ ຈະຕ້ອງໃຫ້ປະຊາຊົນ ຮັບຮູ້ໄວ້ ກ່ອນຕັ້ງຫລາຍເດືອນ, ບໍ່ແມ່ນ ຢ່າງ ສອງເດືອນ ທີ່ຖ່ານ ເຮັດ.

ຖ່ານ ກໍ່ເຮັດໄດ້ ຢູ່ດອກ ໃນການປະກາດ ທີ່ຈະມີການເລືອກຕັ້ງພາຍໃນ ສອງເດືອນ, ເພາະ ຜູ້ສະມັກ ແລະ ຜູ້ທີ່ຈະໄດ້ທາງພັກ ເພີ່ນບົງການໄວ້ແລ້ວ. ບໍ່ຕ້ອງ ໄປ ຫາສຽງ ໃຫ້ມັນເສຍເວລາ.

ດີບໍ!!! ປະຫຍັດດີ!!!!????

ແລະ ຝີເຜດ ກ່າວຕື່ມອີກວ່າ:

"ແຕ່ເຫດຜົນທີ່ແທ້ຈິງແລ້ວ ໃນການທີ່ຕ້ອງເລັ່ງຈັດໃຫ້ມີການເລືອກຕັ້ງໃຫ້ໄວຂຶ້ນມານັ້ນກໍແມ່ນຕ້ອງການຢາກຈະໃຫ້ ສ.ສ. ທີ່ຈະໄດ້ເຂົ້າມາບໍຣິຫານງານໃຫມ່ນັ້ນ ສາມາດຜ່ານຂັ້ນຕອນແລະຮຽນຮູ້ເຣື້ອງກົດຫມາຍ ທີ່ກ່ຽວຂ້ອງກັບການປະຕິຮູບ ເສຖກິຈແລະສັງຄົມອັນເປັນຜົນທີ່ເນື່ອງມາຈາກກອງປະຊຸມຂອງພັກປະຊາຊົນປະຕິວັດຄັ້ງທີ່ເຈັດທີ່ຜ່ານມານັ້ນ".

ແມ່ນແທ້ບໍ່!!!!???!!!!

ບໍ່ແມ່ນຟ້າວ ເຂົ້າໄປກົ້ມຮັບຄໍາສັ່ງມັດຕິ ທີ່ສົ່ງຜ່ານມາ ແຕ່ ຮາໂນຍ ບໍ່ແມ່ນບໍ່!!!????

ໜັງສືສັນຍາທີ່ຍົກເມືອງລາວ ໃຫ້ເປັນເມືອງຂຶ້ນຂອງຍວນ ໒໕ ປີ ທີ່ເຊັນໂດຍ ໄກສອນ ພົມວິຫານ ກໍຈະຫມົດກໍານົດໃນ ເດືອນ ຝົ ເດືອນ ໆ ນີ້!!!

ບໍ່ແມ່ນຟ້າວ ເຂົ້າໄປຕໍ່ບໍ່ມື ນົບຂາບ ແລະ ເຊັນຮັບເອົາ ການເປັນເມືອງຂຶ້ນຂອງຍວນ ຕໍ່ໄປອີກ ບໍ່ແມ່ນບໍ່!!!!????

ເຫດຜົນຂອງ ທ່ານ ຝີເຜດ ອ້າງບໍ່ຂຶ້ນ ເພາະວ່າ ສ.ສ. ຂອງທ່ານທີ່ຈະເຂົ້າມາບໍລິຫານງານໃຫມ່ນັ້ນ ບໍ່ມີສິດມີອໍານາດໃນການອອກກົດຫມາຍແຕ່ຢ່າງໃດ. ມີແຕ່ຫນ້າທີ່ ເຂົ້າໄປຍົກມື ຕົບຕີນ ຕົບຕີນ ໃຫ້ກັບມັດຕິ ຂອງພັກທີ່ ຜ່ານການອະນຸຍາດຮັບຮອງມາແຕ່ ຮ່າໂນຍ ແລ້ວ. ທ່ານ ສ.ສ. ທັງຫລາຍ ທັງທ່ານ ຝີເຜດ ຈິ່ງເປັນພຽງແຕ່...ສ.ສ. ກືກ !!

ສະຫາຍ ຝີເຜດ ຍັງກ້າກ່າວອີກວ່າ:

"ຫາກການເລືອກຕັ້ງກໍານົດເອົາເດືອນທັນວາ ໒໐໐໔ ນີ້ມັນຈະເຮັດໃຫ້ ສ.ສ. ທີ່ຈະໄດ້ເຂົ້າມາປະຕິບັດວຽກງານໃນສະພາ ກໍຄົງຈະກາຍມາເປັນປີ ໒໐໐໓ ໄປແລ້ວ, ເຊິ່ງຈະເຮັດໃຫ້ສະພາຊຸດໃຫມ່ມີອາຍຸສັ້ນເຂົ້າໄປຕື່ມເພາະຕາມແຜນການນັ້ນສະພາຈະຕ້ອງມີອາຍຸການເຮັດວຽກງານຢູ່ຕັ້ງແຕ່ປີ ໒໐໐໑ ຫາ ປີ ໒໐໐໕."

ໂອຍ!!! ທ່ານເອີຍ!!!

ສັ້ນ ຫລື ຍາວ...!!!????

ມັນກະບໍ່ມີຄວາມຫມາຍຫຍັງດອກ!!!!

ເພາະ ພວກທ່ານ ສ.ສ. ເປັນພຽງແຕ່ ຫຸ່ນ! ປາກບໍ່ໄດ້! ຖຽງບໍ່ດັງ!... ລໍຖ້າແຕ່ ຟັງຄໍາສັ່ງ!!!

ນີ້ບໍ່ ເພິ່ນເອີ້ນວ່າ ສ.ສ. ຫລືວ່າ ຜູ້ແທນ ປະຊາຊົນ???!!!

ຖ້າທ່ານ ສ.ສ. ບໍ່ເປັນຜູ້ແທນ ປະຊາຊົນ ແລ້ວ, ພວກທ່ານເປັນ ຜູ້ແທນ ຂອງໃຜກັນແທ້??!! ຄົງຈະເປັນ ຜູ້ແທນ

ຫຸ່ນ ຂອງພັກເທົ່ານັ້ນແມ່ນບໍ່ ຫລື ເປັນ ຜູ້ແທນ ຂອງວຽດນາມ???!!!
ຖ້າເປັນຈັ່ງຊັ້ນ,
ຂະພະເຈົ້າ ຢ້ານວ່າ ປະຊາຊົນ ຈະເອີ້ນ ພວກ ຖ່ານ ວ່າ: ສໍ ເສຍ, ຫລືວ່າ ສ່ວນ ເສຍ, ຫລືວ່າ ສິ່ງ ເສຍ.
ພວກຖ່ານ ຜູ້ແທນ ອາດກາຍເປັນ "ຜູ້ແທ້ນ" ປະຊາຊົນ ໄປກໍໄດ້ໃນບໍ່ຊ້າ !!!!....
ຕອບ ຄວາມຈິງ ມາໃຫ້ ປະຊາຊົນ ຮັບຮູ້ ເສຍດີໆ ວ່າ ພວກທ່ານ ຟ້າວເຂົ້າໄປ ເຊັນຮັບ ແລະ ຂາບໄຫວ້ ເອົາສັນຍາ ສະບັບ ນັ້ນ ຮັບຮອງ ການຂະຍາຍເວລາ ການເປັນທົ່ວເມືອງຂຶ້ນ ຂອງວຽດນາມ ໂດຍ ຖືກຕ້ອງຕາມກົດຫມາຍ.
ເພາະປີ ໑໙໗໗, ມີ ແຕ່ ໄກສອນ ພົມວິຫານ ເຊັນ ມອບລາວ ໃຫ້ເປັນເມືອງຂຶ້ນຂອງວຽດນາມ ແຕ່ຜູ້ງຄົນດຽວ, ມັນບໍ່ຄ່ອຍຄັກປານໃດ.
ບາດນີ້, ໃຫ້ ສະພາ ຜູ້ແທນ ເຊັນ ຮັບເອົາ ຄົງຈະມີຄວາມຫມາຍກວ່າ.
**ບໍ່ຕ້ອງ ຫລິ້ນ ລະຄອນ ຕົບຕາ ປະຊາຊົນ!!!**

ຖ່ານ ຜີເຜດ ກ່າວຕໍ່ອີກວ່າ:
"...ປັດຈຸບັນສະພາປະຊາຊົນປະຕິວັດລາວ ປະກອບດ້ວຍ ສ.ສ. ໗໙ ຄົນ ແຕ່ສະພາຊຸດໃຫມ່ທີ່ຈະເລືອກ ເຂົ້າມາບໍຣິຫານງານເທື່ອນີ້ຈະເພີ້ມຂຶ້ນເປັນ ໑໐໐ ຄົນຂຶ້ນໄປເພາະຄາດວ່າໃນປີຫນ້ານີ້ ປະຊາກອນລາວໃນທົ່ວປະ ເທດ ຈະເພີ້ມຂຶ້ນເປັນ ๕.๔ ລ້ານຄົນ, ໂດຍແຕ່ລະເຂດການເລືອກຕັ້ງຈະເປັນຕົວແທນ ໃຫ້ກັບປະຊາຊົນ ๕໐,໐໐໐ ຄົນ ນອກຈາກນີ້ກໍຍັງມີເຂດປົກຄອງພິເສດແລະແຂວງຂນາດນ້ອຍຊຶ່ງມີປະຊາກອນຕ່ຳກວ່າ ໑๕໐,໐໐໐ ຄົນ ອີກສາມເຂດ."
ເຂດນ້ອຍ ເຂດໃຫຍ່ ແບ່ງໄປຫຍັງເດ!!!???    ບໍ່ມີຄວາມຫມາຍຫຍັງດອກ!!!
ເພາະວ່າ ພວກຜູ້ແທນ ທີ່ຈະເລືອກເຂົ້າມານັ້ນ ບໍ່ໄດ້ເປັນ ຕົວແທນ ຂອງປະຊາຊົນ. ພວກເຂົາ ຈະເປັນ ຕົວແທນ ຂອງ ພັກເທົ່ານັ້ນ ແລະ ເຮັດວຽກຕາມພັກສັ່ງ ໂດຍບໍ່ມີສິດປາກ ສິດສຽງ ຫຍັງຫມົດ.  ໄດ້ແຕ່ ໄປ ຍົກມື "ຈ້າວ" ກັບ "ໂດຍ" ໃນສະພາຂອງພັກປະຊາຊົນປະຕິວັດລາວ.
ທີ່ວ່າ ๕.๔ ລ້ານຄົນ ທີ່ຈະເພີ້ມຂຶ້ນນັ້ນ ຄົງຈະນັບລວມເອົາທັງ ພວກວຽດນາມທີ່ເຂົ້າມາດຳລົງຊີວິດໃນລາວໂດຍທີ່ມີການ ຍິນຍອມຂອງພັກແລະລັດ ແມ່ນບໍ່ ທ່ານ ຜີເຜດ?!
ສ່ວນ ສ.ສ. ຂອງທ່ານຈະເພີ້ມຂຶ້ນ ຫລື ຫລຸດລົງ ຈາກ ໗໙ ເປັນ ໑໐໐ ຫລື ๔໐໐ ກໍ່ຄົງຈະບໍ່ມີບັນຫາຫຍັງດີຫມົດ ໃຫ້ແກ່ຊາດບ້ານເມືອງ!!!

ເພາະວ່າ ທັງຫມົດ ສ.ສ. ສໍ ສິ້ນ ຂອງທ່ານລ້ວນແຕ່ແມ່ນມາຈາກ ພັກ ດຽວ ຫລືວ່າ ພັກ ດຽວ.  ເຂົ້າໄປເຮັດວຽກ ກໍ່ບໍ່ມີ ລິດເດດ ຫຍັງຫມົດ,

ອ່ອນປານ ພັກຫນື້ງ!!!

ເພາະ ເວົ້າບໍ່ໄດ້, ປາກບໍ່ເປັນ, ໄດ້ແຕ່ຖືກໃຊ້!!!!

ສະຫາຍ ຜີເຜດ ກ່າວອີກວ່າ:

"ສຳຫລັບຄຸນສົມບັດຂອງຜູ້ສມັກຮັບເລືອກຕັ້ງເຂົ້າມາເປັນ ສ.ສ. ນັ້ນ ຈະໃຫ້ທຸກຄົນໄດ້ມີສ່ວນຮ່ວມທຸກໆຣະດັບການສຶກສາ ໂດຍບໍ່ຈຳເປັນຈະຕ້ອງຮຽນຈົບການສຶກສາຣະດັບຂັ້ນສູງໆ ເພາະເຄີຍມີຂໍ້ສເນີໃຫ້ ສ.ສ. ຈະຕ້ອງຮຽນຈົບຣະດັບຂັ້ນມັທຍົມເປັນຢ່າງນ້ອຍ ແມ່ນໄດ້ຮັບການຄັດຄ້ານຢ່າງຫນັກຫນ່ວງຈາກຄນະພັກ ເພາະບຸກຄົນທີ່ອາສັຍຢູ່ໃນປ່າໃນເຂດກັນດານບາງຜູ້ຄົນບໍ່ໄດ້ຮ່ຳຮຽນຕາມຣະບົບການສຶກສາຂອງໃນເມືອງແຕ່ກໍມີຄວາມສາມາດມີປະສົບການທາງດ້ານການປາກເວົ້າ ແລະສາມາດນຳເອົາມາໃຊ້ຢູ່ໃນສະພາຜູ້ແທນໄດ້. ແຕ່ໂດຍຂໍ້ເທັດຈິງ ແລ້ວຄົນທີ່ໄດ້ຮັບເລືອກເຂົ້າມາສະພາຈະຮຽນຈົບຈາກຂັ້ນມັທຍົມເປັນຢ່າງນ້ອຍຢູ່ແລ້ວ ແຕ່ກົດຫມາຍກໍໄດ້ເປີດໂອກາດ ໃຫ້ທຸກໆຄົນມີສ່ວນຮ່ວມຢູ່ແລ້ວ"

ໂອຍ! ເວົ້າເປັນຕາຢາກຫົວແທ້ນໍ! ທ່ານ ຜີເຜດ!!!

ເປີດໂອກາດ ໃຫ້ທຸກຄົນແທ້ບໍ່????!!!!

ຄືຈັງເຫັນ ແຕ່ຄົນຂອງພັກ ເທົ່ານັ້ນ ທີ່ຖືກ ຕັ້ງແຕ່ງ ໃຫ້ລົງສະມັກ!!!???

ຢ່າງົມເວົ້າ ເອົາ ແນວບໍ່ສົມເຫດສົມຜົນຫລາຍມາເວົ້າ! ນະອາຍ ຟ້າແຖນ ແນ່!!!....

ຜູ້ທີ່ ອາໃສ ໃນດົງໃນປ່າ ທີ່ມີຄວາມສາມາດໃນການປາກເວົ້າ ທີ່ທ່ານວ່າ ນັ້ນ ທີ່ຈະມາຮັບໃຊ້ໃນສະພາໄດ້ແທ້ຈິງ ຫລືບໍ່???!!!!

ມີໃຜແນ່ ທີ່ກ້າໂຕ້ຖຽງ ໃນສະພາ????!!!! ມີໃຜແນ່!!!!!?????

ຢ່າລືມ ວ່າ ສະພາ ເປັນບ່ອນທີ່ ໂຕ້ຖຽງ ຂອງຜູ້ແທນປະຊາຊົນເດີ. ບໍ່ແມ່ນ ໄປນັ່ງ ອົມຂີ້ແຂ້ວ ກົ້ມຫົວ ຂາບໄຫວ້ ໃຫ້ມັດຕິ ຂອງພັກໃດ!!!  ໄປທຳຫນ້າທີ່ ໃຫ້ປະຊາຊົນໃດ໋, ບໍ່ແມ່ນໄປທຳຫນ້າທີ່ ໃຫ້ພັກໃດ໋ ຖ່ານເອີຍ!!!!

ຖ້າມີຄວາມສາມາດເວົ້າໄດ້ ແຕ່ໃນດົງໃນປ່າ, ບາດຂຶ້ນມາ ສະພາ ແລ້ວ ເວົ້າບໍ່ໄດ້ ຍ້ອນພັກບໍ່ໃຫ້ເວົ້າ ຫລື ບໍ່ກ້າເວົ້າ ຍ້ອນຢ້ານພັກເອົາຄົນມາຮັບເອົາຕອນກາງຄືນ ກໍ່ບໍ່ມີຄວາມຫມາຍຫຍັງຫມົດ.

ແຕ່ຢ່າລືມວ່າ, ມີຄວາມສາມາດໃນການປາກເວົ້າໃນດົງໃນປ່າ ແລ້ວ ຈະມີຄວາມສາມາດເວົ້າໃນສະພາ ໄດ້ໂລດເດີ!!!

ຕ້ອງເບິ່ງທີ່ ຜົນງານເດີ!!!

ການສຶກສາ ກໍ່ມີສ່ວນຊ່ວຍເຫມືອນກັນ.

ແຕ່ຖ້າມີການສຶກສາສູງ ແຕ່ ຖ້າບໍ່ນຳໃຊ້ ການສຶກສາສູງ

ນັ້ນໃຫ້ເກີດປະໂຫຍດກໍບໍ່ມີຄວາມຫມາຍຫຍັງ ເຊັ່ນກັນ.

ຖ້າມີການ ສຶກສາສູງ ແຕ່ໄປນຳໃຊ້ ໃຫ້ ສິ່ງຕ່ຳໆ

ຂອງພັກ ຫລື ບໍ່ນຳໃຊ້ເລີຍ ກໍ່ບໍ່ມີຄວາມຫມາຍ ເຊັ່ນດຽວກັນ.

ທ່ານ ຜີເຜດ ກ່າວຊ້ຳທ້າຍວ່າ:

"...ກົດຫມາຍຣັຖທັມນູນໃຫມ່ ຂອງພັກຄອມມຸຍນິດລາວທີ່ຂຽນຂື້ນມາໃຫມ່ແມ່ນຣະບຸອອກມາຊັດເຈນວ່າ:

"ພົລເມືອງລາວທີ່ອາສັຍຢູ່

ແລະເຮັດວຽກງານປະກອບສ່ວນກັບພັກ/ລັດຢູ່ໃນປະເທດລາວເທົ່ານັ້ນທີ່ມີສິດເສຣີພາບເຂົ້າມາສະມັກເລືອກຕັ້ງເປັນ

ຜູ້ແທນໄດ້. ສຳຫລັບຄົນລາວຢູ່ໃນຕ່າງປະເທດ ເຖີງແມ່ນວ່າຈະມີຣະດັບການສຶກສາສູງໆຂັ້ນດອກເຕີ ຂັ້ນປະຣິນ

ຍາ ແລະປັນຍາຊົນ ຖືວ່າເປັນປໍຣະປັກໃຫ້ກັບແຜ່ນດິນທີ່ຫນີອອກມາຕໍ່ຕ້ານຣັຖບານແມ່ນບໍ່ມີສິດແລະພົນປໂຍດ

ໃດໆທີ່ຈະເຂົ້າມາປະກອບສ່ວນຢູ່ໃນການເລືອກຕັ້ງໄດ້ໂດຍເດັດຂາດ. ຍົກເວັ້ນຄົນລາວ ທີ່ຫນີອອກມາກ່ອນປີ ໑໙໗໐

ນັ້ນຣັຖບານລາວຈະມີນະໂຍບາຍໃຫ້ກັບຄືນໄປລົງທືນ ແລະຊ່ວຍເຫລືອໃນສິ່ງທີ່ຈຳເປັນໄດ້ຢ່າງຖືກຕ້ອງ

ຕາມກົດຫມາຍຢູ່ໃນບ້ານເກີດຂອງຕົນ."

ເອົ໊າໄດ້ ງານ ຫລາຍ ແລະ ເປັນຕາຟັງ ອີຫລີໃດ໋ນໍ!!!! ທ່ານ ຜີເຜດ!!!

ຄວາມຫມາຍ ຂອງ ທ່ານ ກໍ່ແມ່ນພຽງແຕ່ຢາກໄດ້ ເງີນ ແລະ ເງີນ ຈາກການລົງທືນ ຂອງຊາວລາວທີ່ຕ່າງປະເທດທໍ່ນັ້ນ

ແມ່ນບໍ່!!!????

ຢາກໃດ ເທົ່າໃດ ທ່ານ ຈຶ່ງຈະພໍ??? ຄືຊິບໍ່ມີເມືອງພໍແລະນໍ ທ່ານ ເອີຍ!!!

ເປັນຫຍັງ ທ່ານ ຈຶ່ງຢາກຕ້ອງການ ຢາກໄດ້ເງີນ???

ກະລຸນາ ຕອບຄຳຖາມນີ້ໄດ້ບໍ່?

ທຸກຄົນ ທີ່ເຂົາຢາກມາລົງທຸນ, ເຂົາກໍ່ຢາກ ມີສິດ ມີສຽງ. ບໍ່ແມ່ນ ມາໂມະ ເງີນ ໃຫ້ກັບຕົກຂອງທ່ານ ແລ້ວ ທ່ານ

ເຊືອດໄສ ມັດຄໍເຂົາໄປເຂົ້າຄຸກ ຂໍ້ຫາ ເປັນນັກສືບສອດແນມ ຫລື ທຳການຄັດຄ້ານລັດຖະບານ... ອັນນີ້ ມັນກໍ່ບໍ່ຖືກ,

ຜິດກົດຫມາຍສາກົນ ແລະ ຜິດສິນທັມ. ພວກເຮົາ ກໍ່ຮູ້ຢູ່ວ່າ ພວກທ່ານ ບໍ່ມີສິນທັມ, ແຕ່ ຢ່າງນ້ອຍກໍ່ໃຫ້ ຜູ້ທີ່ເຂົາມາ

ລົງຫີນ ໄດ້ມີສິດ ມີສຽງແມ່. ຢ່າຊູ່ ຢ່າເຂັນ ເຂົາຫລາຍ, ບາດເຂົາ ເຂັນຊູ່ ຖ່ານຄືນ ຖ່ານອາດຈະຫາບ່ອນຢູ່ຍາກ. ຫວັງວ່າ ຖ່ານຄົງຈະເຂົ້າໃຈ.

ຄົນເຮົາ ໂດຍທົ່ວໄປແລ້ວ ແມ່ນ ຕ້ອງການ ສິດທິ ທາງການເມືອງ, ບໍ່ແມ່ນແຕ່ມີ ສິດທິ ແຕ່ທຳມາຄ້າຂາຍເທົ່ານັ້ນ. ທຸກຄົນ ຖ້າບໍ່ມີສິດທິ ທາງການເມືອງ ກໍ່ບໍ່ແມ່ນຄົນເທົ່ານັ້ນແລ !

ເມື່ອ ຖ່ານ ຕັດສິດ ທາງການເມືອງຂອງປະຊາຊົນລາວແລ້ວ, ກໍ່ເຫມືອນຖ່ານ ປະຕິບັດ ຕໍ່ພວກເຂົາ ຢ່າງໄຮ້ມະນຸດ (ຂະພະເຈົ້າ ບໍ່ຢາກເອົ້າ ສັບນັ້ນ ອອກມາ ເພາະມັນຫນ້າລັງກຽດ, ຖ່ານ ຄົງຈະເຂົ້າໃຈ. ແລະ ກໍ່ຫວັງວ່າ ທ່ານ ຜູ້ອ່ານ ແລະ ນັກຮຽນນັກສຶກສາ ຄົງຈະເຂົ້າໃຈຄວາມຫມາຍຂອງຂະພະເຈົ້າ ເຊັ່ນດຽວກັນ).

ສ່ວນ ຖ່ານ ພີເຜດ ທີ່ກ່າວອ້າງ ເອົາ ກົດຫມາຍລັດທັມມູນໃຫມ່ ມາອ້າງວ່າ:

"ພົລເມືອງລາວທີ່ອາສັຍຢູ່ ແລະເຮັດວຽກງານປະກອບສ່ວນກັບພັກ/ລັດຢູ່ໃນປະເທດລາວເທົ່ານັ້ນທີ່ມີສິດເສຣີພາບເຂົ້າ ມາສະມັກເລືອກຕັ້ງເປັນຜູ້ແທນໄດ້."

ແຕ່ ຖ້າ ປະຊາຊົນ ທີ່ ອາໃສຢູ່ລາວ ແລະ ບໍ່ໄດ້ເຮັດວຽກງານປະກອບສ່ວນກັບພັກ/ລັດ ເດ!!! ຈະມີສິດເສລີພາບເຂົ້າມາ ສະມັກຮັບເລືອກຕັ້ງເປັນ ຜູ້ແທນໄດ້ບໍ່????

ຄົງຈະບໍ່ໄດ້ແມ່ນບໍ່!!!!

ມາເຖິງຕອນນີ້ ຖ່ານ ຕັດມື ຕັດຕີນ ປະຊາຊົນລາວ ໃນປະເທດບໍ່ໃຫ້ ມາລົງສະມັກຮັບເລືອກຕັ້ງໄດ້ ຢ່າງພວກຖ່ານ ແມ່ນບໍ່!!! ປິດລ້ອມ ແລະ ບີບຮັດ ປະຊາຊົນ ລາວທັງອ້ອມ.

ພວກຂະພະເຈົ້າ ຮູ້ແລ້ວວ່າ ພວກຖ່ານຕັດ ແລະ ປິດປະຕູ ບໍ່ໃຫ້ຄົນລາວໃນຕ່າງແດນ ມາມີບົດບາດທາງການເມືອງ ໃນປະເທດ ເພາະພວກທ່ານ ຢ້ານ ແລະ ກົວ ການເມືອງ ທີ່ຖືກຕ້ອງ ແລະ ເປັນທັມ ຂອງປະຊາຊົນລາວໃນ ຕ່າງປະ ເທດ. ກົວການເມືອງ ທີ່ ເປື່ອຍເຍື່ອຍ ຂອງພວກຖ່ານ ຈະຖືກເຜີຍແພ ໃຫ້ປະຊາຊົນລາວ ແລະຊາວໂລກຮູ້.

ສະນັ້ນ ພວກຖ່ານ ຈຶ່ງປ່ຽນ ຈາກລັດຖທັມມູນເກົ່າ ຂອງຄອມມຸຍນິດ ມາສູ່ ລັດຖທັມມູນໃຫມ່ ຂອງຄອມມູຍນິດ.

ປ່ຽນ ບໍ່ ປ່ຽນ ກໍ່ຍັງເປັນ ລັດຖທັມມູນ ຂອງຄອມມູຍນິດ ເຫມືອນເກົ່າ.

ບີບບີ້ ຂົ່ມເຫັງ ຫນີບເຕັງ ແລະ ມັດຄໍ ປະຊາຊົນ!!!!

ຂໍຂອບໃຈ

ໂນເນນ

໐໓ ມີນາ ໒໐໐໔